ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ

ເລກທີ 0764 /ກທຄວ.ອຄ

ນະຄອນຫຼວງວຽງຈັນ, ວັນທີ 25 ມິຖຸນາ 2019

**ເຖິງ:** - ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ

- ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ

**ເລື່ອງ:** ກວດກາຄືນກ່ຽວກັບການຂຶ້ນທະບຽນວິສາຫະກິດ ກ່ຽວກັບທຸລະກິດການຄ້າຂາຍຍົກ ແລະ ການຄ້າຂາຍຍ່ອຍ ສຳລັບຜູ້ລົງທຶນຕ່າງປະເທດ.

- ອີງຕາມຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ສະບັບເລກທີ 1752/ອຄ, ລົງວັນທີ 19 ກັນຍາ 2016;
- ອີງຕາມຂໍ້ຕົກລົງ ວ່າດ້ວຍທຸລະກິດການຄ້າຂາຍຍົກ ແລະ ການຄ້າຂາຍຍ່ອຍ, ສະບັບເລກທີ 1005/ອຄ.ຄພນ, ລົງວັນທີ 22 ພຶດສະພາ 2015.

ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ (ກະຊວງອຸດສາຫະກຳ ແລະ ການຄ້າ) ແຈ້ງໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ແລະ ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ ດັ່ງນີ້:

1. ກວດກາຄືນ ການຂຶ້ນທະບຽນວິສາຫະກິດ ກ່ຽວກັບທຸລະກິດການຄ້າຂາຍຍົກ ແລະ ການຄ້າຂາຍຍ່ອຍ ໃຫ້ຄົນຕ່າງປະເທດ ໃຫ້ສອດຄ່ອງກັບເງື່ອນໄຂ ຕາມມາດຕາ 13 ຂອງຂໍ້ຕົກລົງ ວ່າດ້ວຍທຸລະກິດການຄ້າຂາຍຍົກ ແລະ ການຄ້າຂາຍຍ່ອຍ, ສະບັບເລກທີ 1005/ອຄ.ຄພນ, ລົງວັນທີ 22 ພຶດສະພາ 2015;

2. ຖ້າພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ແລະ ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ຫາກຂຶ້ນທະບຽນວິສາຫະກິດ ບໍ່ສອດຄ່ອງຕາມເງື່ອນໄຂທຶນຈົດທະບຽນ ແລະ ສັດສ່ວນການຖືຮຸ້ນ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງດັ່ງ ກ່າວໃນຂໍ້ 1 ເທິງນີ້ ແມ່ນໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດທີ່ກ່ຽວຂ້ອງ ລຶບລ້າງໃບທະບຽນວິສາຫະກິດນັ້ນ ໂດຍທັນທີ. ເວັ້ນເສຍແຕ່ ວິສາຫະກິດທີ່ກ່ຽວຂ້ອງ ໄດ້ມາປັບປຸງໃຫ້ສອດຄ່ອງຕາມເງື່ອນໄຂຂອງຂໍ້ຕົກລົງ ສະບັບເລກທີ 1005/ອຄ.ຄພນ, ລົງວັນທີ 22 ພຶດສະພາ 2015;

3. ຖ້າພົບເຫັນການອອກທະບຽນວິສາຫະກິດ ທີ່ຂັດກັບ ຂໍ້ 1 ເທິງນີ້ ໃຫ້ພະແນກອຸດສາຫະກຳແລະການຄ້າ ແຂວງ, ນະຄອນຫຼວງ ດຳເນີນການກວດສອບ ສາເຫດ ການອອກໃບທະບຽນວິສາຫະກິດດັ່ງກ່າວ ແລະ ໃຫ້ເຮັດບົດລາຍງານ ກົມທະບຽນ ແລະຄຸ້ມຄອງວິສາຫະກິດ (ກະຊວງອຸດສາຫະກຳ ແລະການຄ້າ) ດ່ວນ.

ແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດ,

**ຫົວໜ້າກົມ**

ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ

ກະຊວງອຸດສາຫະກຳ ແລະ ການຄ້າ

ດຣ.ສົມພອງ ພຽນພົມມິດ